ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------0000-------

ກະຊວງການເງິນ
ກົມສ່ວຍສາອາກອນ

ເລກທີ 1783 /ກງ.ກສອ

ນະຄອນຫຼວງວຽງຈັນ, ວັນທີ 17 FEB 2015

**<u>ແຈ້ງການ</u>**

**ເຖິງ:** ຫົວໜ້າພະແນກສ່ວຍສາອາກອນແຂວງ, ນະຄອນຫຼວງໃນຂອບທົ່ວປະເທດ.

**ເລື່ອງ**: ການເສຍຄ່າທຳນຽມທາງ ສົກປີ 2015.

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມທາງ ແລະ ຄ່າບໍລິການ;
- ອີງຕາມແຈ້ງການຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ 0078/ກງ,ລົງວັນທີ 12 ມັງກອນ 2009 ກ່ຽວກັບການຈັດຕັ້ງປະຕິບັດລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ວ່າດ້ວຍຄ່າ ທຳນຽມ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການເກັບຄ່າທຳນຽມ ແລະ ຄ່າບໍລິການ ໂດຍສະເພາະຄ່າທຳນຽມທາງ ສົກ ປີ 2015 ໃຫ້ມີຄວາມຖືກຕ້ອງ, ທັນກັບກຳນົດເວລາ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ກົມສ່ວຍສາອາກອນ ຂໍຖືເປັນກຽດແຈ້ງການມາຍັງທ່ານຫົວໜ້າພະແນກສ່ວຍສາອາກອນແຂວງ, ນະຄອນຫຼວງໃນຂອບເຂດທົ່ວປະເທດຊາບທົ່ວເຖິງກັນວ່າ: ການເກັບຄ່າທຳນຽມທາງ ສົກປີ 2015 ໃຫ້ປະຕິບັດດັ່ງນີ້:

1. ອາຍຸການນຳໃຊ້ໃບຄ່າທຳນຽມທາງປີ 2015: ໃບເສຍຄ່າທຳນຽມທາງ ປີ 2015 ມີອາຍຸການນຳໃຊ້ 12 ເດືອນ, ຕາມປີປະຕິທິນຄືນັບແຕ່ວັນທີ 01 ມັງກອນ 2015 ຫາ ວັນທີ 31 ທັນວາ 2015;
2. ໄລຍະການເສຍຄ່າທຳນຽມທາງປີ 2015: ໄລຍະການເສຍຄ່າທຳນຽມທາງແມ່ນກຳນົດໃຫ້ເສຍໄລຍະເວລາ 3 ເດືອນຕາມປົກກະຕິແມ່ນນັບແຕ່ວັນທີ 01 ມັງກອນ 2015 ຫາ ວັນທີ 31 ມີນາ 2015. ສຳລັບສົກປີ 2015 ໄລຍະຂອງການເສຍຄ່າທຳນຽມທາງ ແມ່ນນັບແຕ່ວັນທີ 01 ມີນາ ຫາ ວັນທີ 31 ພຶດສະພາ 2015 ເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວແລ້ວຈະຖືກປະຕິບັດມາດຕະການແນະນຳສຶກສາອົບຮົມ ແລະ ປັບໃໝ 10% ຂອງຈຳນວນເງິນຄ່າທຳນຽມທາງທີ່ຕ້ອງເສຍ. ພ້ອມດຽວກັນນີ້ກ່ອນຈະເສຍຄ່າທຳນຽມທາງ ປີ 2015

ໃຫ້ກວດຄືນຄ່າທຳນຽມທາງ ປີ 2014.     ຖ້າຍັງເຫັນວ່າບໍ່ທັນເສຍກໍ່ໃຫ້ເສຍຄືນ ແລະ ປັບໃໝ 10% ຂອງຄ່າທຳນຽມທີ່ໃຫ້ເສຍຄືນຕາມການກຳນົດໄວ້ໃນ ມາດຕາ 103 ຂອງລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມທາງ ແລະ ບໍລິການ;

3. ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດນຳໃຊ້ຍານພາຫະນະໃໝ່ໃນລະຫວ່າງປີກໍຕ້ອງເສຍຄ່າທຳນຽມທາງເຕັມປີ, ນັບແຕ່ມື້ຊື້ລົດໃໝ່ເປັນຕົ້ນໄປ ພາຍໃນກຳນົດໄລຍະເວລາ 03 ເດືອນ;

4. ມອບໃຫ້ພະແນກສ່ວຍສາອາກອນແຂວງ, ນະຄອນຫຼວງ, ໜ່ວຍງານສ່ວຍສາອາກອນເມືອງຮີບຮ້ອນສ້າງແຜນ ແລະ ນຳສະເໜີຂໍໃບອົງການນຳກົມສ່ວຍສາອາກອນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງຈັດຕັ້ງເຜີຍແຜ່ ແລະຈັດເກັບຄ່າທຳນຽມທາງ ປະຈຳປີ 2015 ຢ່າງທັນການ, ມີປະສິດທິຜົນ, ໂປ່ງໃສ ແລະ ຮັບປະກັນການມອບເງິນຈາກການຮັບຄ່າທຳນຽມທາງ ສົກປີ 2015 ໃຫ້ທັນສົກງົບປະມານ;

5. ອັດຕາຄ່າທຳນຽມທາງ ສົກປີ 2015 ລາຍລະອຽດໄດ້ກຳນົດດັ່ງນີ້:

| ລ/ດ | ປະເພດພາຫະນະຂົນສົ່ງ | ກີບ/ປີ |
|---|---|---|
| 01 | ລົດສາມລໍ້ຖີບທຸກຊະນິດ | ບໍ່ເກັບ |
| 02 | ລົດຈັກ ແຕ່ 100 ເຊເຊ ລົງມາ | 7,000 ກີບ |
| 03 | ລົດຈັກ ແຕ່ 101 ເຊເຊ ຫາ 150 ເຊເຊ | 8,000 ກີບ |
| 04 | ລົດຈັກ ແຕ່ 151 ເຊເຊ ຂຶ້ນໄປ | 9,000 ກີບ |
| 05 | ລົດສາມລໍ້ແລ່ນດ້ວຍເຄື່ອງຈັກ 2 ບ່ອນນັ່ງ | 10,000 ກີບ |
| 06 | ລົດສາມລໍ້ແລ່ນດ້ວຍເຄື່ອງຈັກ 3 ບ່ອນນັ່ງ | 11,000 ກີບ |
| 07 | ລົດສາມລໍ້ແລ່ນດ້ວຍເຄື່ອງຈັກ ແຕ່ 125 ເຊເຊ ຂຶ້ນໄປ | 12,000 ກີບ |
| 08 | ລົດສາມລໍ້ແລ່ນດ້ວຍເຄື່ອງຈັກ ແຕ່ 550 ເຊເຊ ຂຶ້ນໄປ | 18,000 ກີບ |
| 09 | ລົດເກງ, ລົດຈິບ, ລົດກະບະ ແຕ່ 1200 ເຊເຊ ລົງມາ | 20,000 ກີບ |
| 10 | ລົດເກງ, ລົດຈິບ, ລົດກະບະ ແຕ່ 1201 ເຊເຊ ຂຶ້ນໄປ | 52,000 ກີບ |
| 11 | ລົດບັນທຸກ ນໍ້າໜັກລວມບໍ່ເກີນ 7 ໂຕນ | 104,000 ກີບ |
| 12 | ລົດບັນທຸກ ນໍ້າໜັກລວມເກີນ 7 ໂຕນ ຂຶ້ນໄປ | 130,000 ກີບ |
| 13 | ລົດເມ ແຕ່ 7 ບ່ອນນັ່ງລົງມາ | 52,000 ກີບ |
| 14 | ລົດເມ ແຕ່ 8 ບ່ອນນັ່ງ ຫາ 15 ບ່ອນນັ່ງ | 59,000 ກີບ |
| 15 | ລົດເມ ແຕ່ 16 ບ່ອນນັ່ງ ຫາ 24 ບ່ອນນັ່ງ | 78,000 ກີບ |
| 16 | ລົດເມ ແຕ່ 25 ບ່ອນນັ່ງ ຫາ 35 ບ່ອນນັ່ງ | 104,000 ກີບ |
| 17 | ລົດເມ ແຕ່ 36 ບ່ອນນັ່ງ ຂຶ້ນໄປ | 117,000 ກີບ |
| 18 | ລົດກົນຈັກໜັກ | ບໍ່ເກັບ |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

**ຫົວໜ້າກົມສ່ວຍສາອາກອນ;**

ສິດທິສອນ ເທບພາສີ